ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຄຳແນະນຳ

## ການສ້າງແຜນແມ່ບົດ ສຳລັບວຽກງານ
## ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ກົມນະໂຍບາຍ ແລະ ນິຕິກຳ

ກະຊວງກະສິກຳ ແລະ ປ່າໄມ້

2021

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 0146/ກປ
ນະຄອນຫຼວງວຽງຈັນ, ວັນທີ 01 FEB 2021

# ຂໍ້ຕົກລົງ
## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ຄຳແນະນຳ ການສ້າງແຜນແມ່ບົດ ສຳລັບວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມນະໂຍບາຍ ແລະ ນິຕິກຳ ສະບັບເລກທີ 1013/ກນບ, ລົງວັນທີ 22 ທັນວາ 2020.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:

**ມາດຕາ 1** ອະນຸມັດ ຮັບຮອງ ແລະ ປະກາດໃຊ້ ຄຳແນະນຳ ການສ້າງແຜນແມ່ບົດ ສຳລັບວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.

**ມາດຕາ 2** ມອບໃຫ້ ກົມນະໂຍບາຍ ແລະ ນິຕິກຳ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ຄຳແນະນຳ ການສ້າງແຜນແມ່ບົດ ສຳລັບວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 1.

**ມາດຕາ 3** ຫ້ອງການ, ບັນດາກົມ, ສະຖາບັນ ແລະ ທຽບເທົ່າ ອ້ອມຂ້າງກະຊວງ ກະສິກຳ ແລະ ປ່າໄມ້, ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | | |
|---|---|---|
| 1. | ທ່ານ ລມຕ, ຮລມຕ | 05 ສະບັບ (ເພື່ອລາຍງານ) |
| 2. | ຫ້ອງການກະຊວງ | 01 ສະບັບ (ເພື່ອຊາບ) |
| 3. | ພະແນກເລຂານຸການ ແລະ ພິທີການ | 01 ສະບັບ |
| 4. | ເກັບມ້ຽນ | 01 ສະບັບ |

## ຄຳນຳ

ແຜນແມ່ບົດ ແມ່ນມີຄວາມສຳຄັນໃນການກຳນົດເປົ້າໝາຍການພັດທະນາ ຂອງລັດຖະບານ ຫຼື ອົງການຈັດຕັ້ງໃດໜຶ່ງ. ການສ້າງແຜນແມ່ບົດ ໝາຍເຖິງການສ້າງແຜນການແຕ່ລະໄລຍະ ເພື່ອໃຫ້ເກີດຜົນໃນການດຳເນີນງານຢ່າງມີປະສິດທິພາບ ແລະ ປະສິດທິຜົນຕາມຈຸດປະສົງ ແລະ ເປົ້າໝາຍຂອງແຜນແມ່ບົດ. ຈຶ່ງຈຳເປັນຕ້ອງອີງໃສ່ຫຼັກການ ແລະ ຂັ້ນຕອນ ທີ່ເໝາະສົມ. ການສ້າງແຜນແມ່ບົດໃນວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ສ່ວນໃຫຍ່ ແມ່ນຕິດພັນກັບຫຼາຍຂະແໜງການ. ດັ່ງນັ້ນ, ການສ້າງແຜນແມ່ບົດຈະຕ້ອງມີການປະສານສົມທົບ ແລະ ການມີສ່ວນຮ່ວມ ຂອງທຸກຂະແໜງການທີ່ກ່ຽວຂ້ອງ ທັງພາຍໃນກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການຈັດຕັ້ງອື່ນໆ ເພື່ອຮັບ ປະກັນຄວາມສອດຄ່ອງ, ຍູ້ໜູນຊຶ່ງກັນ ແລະ ກັນ ໃນການຈັດຕັ້ງປະຕິບັດຜັນຂະຫຍາຍທິດທາງ, ຄາດໝາຍຕ່າງໆ ແຜນແມ່ບົດຈະມີອົງປະກອບທີ່ສຳຄັນເຊັ່ນດຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄື: ວິໄສທັດ, ເປົ້າໝາຍ ແລະ ຍຸດທະສາດທີ່ກຳນົດແນວທາງການດຳເນີນງານແລ້ວ ໂດຍທົ່ວໄປຈະມີການກຳນົດເປົ້າໝາຍເຊີງຍຸດທະສາດ ເພື່ອຊີ້ວັດຜົນການດຳເນີນງານທີ່ຊັດເຈນ ແລະ ເປັນຮູບປະທຳ ເພື່ອຊ່ວຍໃຫ້ຂະແໜງ ການທີ່ກ່ຽວຂ້ອງສາມາດຈັດຕັ້ງປະຕິບັດໃຫ້ບັນລຸຜົນສຳເລັດຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.

ເພື່ອເປັນບ່ອນອີງ ໃນການກະກຽມ, ໂຄງຮ່າງ ແລະ ນຳສະເໜີພິຈາລະນາຮັບຮອງແຜນແມ່ບົດ ໃນຂະແໜງກະສິກຳ ແລະ ປ່າໄມ້, ກົມນະໂຍບາຍ ແລະ ນິຕິກຳ ຊຶ່ງເປັນໃຈກາງໃນການສ້າງແຜນແມ່ບົດ ໄດ້ພັດທະນາຄຳແນະນຳການສ້າງແຜນແມ່ບົດ ສຳລັບ ວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ. ຄຳແນະນຳສະບັບນີ້ ປະກອບມີ 03 ພາກ ຄື: (1) ພາກສະເໜີ; (2) ຫຼັກການ ແລະ ຂັ້ນຕອນການສ້າງແຜນແມ່ບົດ ແລະ (3) ການມີສ່ວນຮ່ວມ ຂອງພາກສ່ວນຕ່າງໆ. ການສ້າງແຜນແມ່ບົດ ແມ່ນເລີ່ມຈາກການກະກຽມເອກະສານແນວຄວາມຄິດ ເພື່ອສະເໜີການນຳກະຊວງກະສິກຳ ແລະ ປ່າໄມ້ ໃຫ້ເຫັນໄດ້ເຖິງຄວາມສຳຄັນຂອງວຽກງານ ຈົນເຖິງ ການດຳເນີນການຮັບຮອງ ແລະ ປະກາດໃຊ້ ແຜນແມ່ບົດຢ່າງເປັນທາງການ.

ຄຳແນະນຳສະບັບນີ້ສ້າງຂຶ້ນ ເພື່ອເປັນເອກະສານແນະນຳໃນການຈັດຕັ້ງປະຕິບັດວຽກງານ ການສ້າງແຜນແມ່ ບົດ ຂອງຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ແທດເໝາະກັບສະພາບຕົວຈິງ, ເປັນໄປຕາມທິດທາງດຽວກັນ ແລະ ເປັນເອກະພາບ ໃນຂົງເຂດວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ແລະ ເປັນການຍູ້ໜູນຂະແໜງການໄປນຳ. ນອກຈາກນີ້, ຍັງສາມາດນຳໃຊ້ຄຳແນະນຳດັ່ງກ່າວ ເຂົ້າໃນການຝຶກອົບຮົມ ເພື່ອສ້າງຄວາມເຂັ້ມແຂງການສ້າງແຜນແມ່ບົດ ໃຫ້ກັບພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ.

**ຫົວໜ້າກົມ**

ປອ. ທັດສະກາ ສະພັງທອງ

ສາລະບານ

ຄຳນຳ.......................................................................................................i

ສາລະບານ...................................................................................................ii

ພາກທີ 1: ພາກສະເໜີ........................................................................................1

ຈຸດປະສົງ...................................................................................................1

ຄວາມສຳຄັນ..................................................................................................1

ລະດັບຄາດໝາຍ................................................................................................1

ພາກທີ 2: ຫຼັກການ ແລະ ຂັ້ນຕອນການສ້າງແຜນແມ່ບົດ................................................1

ຂັ້ນຕອນທີ 1: ກະກຽມສະເໜີ ແນວຄວາມຄິດການສ້າງແຜນແມ່ບົດ.....................................1

ຂັ້ນຕອນທີ 2: ຂຽນແຜນແມ່ບົດ ສະບັບຮ່າງ.............................................................2

ຂັ້ນຕອນທີ 3: ຈັດກອງປະຊຸມ ຜ່ານຮ່າງແຜນແມ່ບົດ....................................................2

ຂັ້ນຕອນທີ 4: ປັບປຸງຮ່າງແຜນແມ່ບົດ ມາເປັນຮ່າງສະບັບສຸດທ້າຍ....................................2

ຂັ້ນຕອນທີ 5: ນຳສົ່ງ ຮ່າງແຜນແມ່ບົດ ສະບັບສຸດທ້າຍ..................................................2

ພາກທີ 3: ການມີສ່ວນຮ່ວມ ຂອງພາກສ່ວນຕ່າງໆ.........................................................3

ເອກະສານຊ້ອນທ້າຍ 1: ໂຄງຮ່າງ " ແນວຄວາມຄິດ ສຳລັບສ້າງແຜນແມ່ບົດ ".........................4

ເອກະສານຊ້ອນທ້າຍ 2: ໂຄງຮ່າງ " ແຜນແມ່ບົດ ".......................................................7

## ພາກທີ 1: ພາກສະເໜີ

### ຈຸດປະສົງ

ຄຳແນະນຳການສ້າງແຜນແມ່ບົດ ມີຈຸດປະສົງ ເພື່ອເປັນບ່ອນອີງແນະນຳ ວິທີການສ້າງແຜນແມ່ບົດ, ໃຫ້ຫ້ອງການ, ບັນດາກົມ, ສະຖາບັນ, ອົງການທຽບເທົ່າ ອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້; ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ໃຫ້ມີຄວາມເປັນເອກະພາບ ດ້ານຂະບວນການ, ວິທີການ ໃນການສ້າງແຜນແມ່ບົດ ເພື່ອຊຸກຍູ້, ສະໜັບສະໜູນ ສຳລັບວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.

### ຄວາມສຳຄັນ

ເພື່ອໃຫ້ສາມາດຈັດຕັ້ງປະຕິບັດຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ແລະ ແຜນຍຸດທະສາດ ຂອງກະຊວງກະສິກຳ ແລະ ປ່າໄມ້ ໃຫ້ມີຜົນສຳເລັດ ຈຳເປັນຕ້ອງມີແຜນແມ່ບົດ ທີ່ສອດຄອງກັບແຜນພັດທະນາ. ດັ່ງນັ້ນ, ຈຶ່ງຕ້ອງມີຄຳແນະນຳສະເພາະໃນການສ້າງແຜນແມ່ບົດ ໃຫ້ມີຄວາມເປັນເອກະພາບ ໃນວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.

### ລະດັບຄາດໝາຍ

ຫ້ອງການ, ບັນດາກົມ, ສະຖາບັນ, ອົງການທຽບເທົ່າ ອ້ອມຂ້າງ ກະຊວງ ກະສິກຳ ແລະ ປ່າໄມ້; ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ໃຫ້ມີຄວາມເຂົ້າໃຈຢ່າງລະອຽດ ກ່ຽວກັບການສ້າງແຜນແມ່ບົດ ແລະ ສາມາດນຳໄປຈັດຕັ້ງປະຕິບັດຕາມເປົ້າໝາຍ ແລະ ແຜນງານໂຄງການ ທີ່ກຳນົດໄວ້ລະອຽດ ຕາມໜ້າທີ່ຄວາມຮັບຜິດຊອບຂອງຕົນ ໃຫ້ສຳເລັດຢ່າງມີປະສິດທິພາບ. ນອກຈາກນັ້ນ, ຄຳແນະນຳນີ້ ຍັງສາມາດນຳໃຊ້ເປັນເອກະສານປະກອບ ແລະ ອ້າງອີງໃນການສອນ ຫຼື ຝຶກອົບຮົມ ກ່ຽວກັບການສ້າງແຜນແມ່ບົດ ໃນວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ.

## ພາກທີ 2: ຫຼັກການ ແລະ ຂັ້ນຕອນການສ້າງແຜນແມ່ບົດ

ການສ້າງແຜນແມ່ບົດ ສຳລັບວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ປະກອບມີ 05 ຂັ້ນຕອນ ຄື:

### ຂັ້ນຕອນທີ 1: ກະກຽມສະເໜີ ແນວຄວາມຄິດການສ້າງແຜນແມ່ບົດ

ພາກສ່ວນທີ່ຂໍສະເໜີສ້າງແຜນແມ່ບົດ ໃຫ້ກະກຽມການນຳສະເໜີແນວຄວາມຄິດ ການສ້າງແຜນແມ່ບົດ ແລະ ຂຽນໜັງສືສະເໜີທາ ກົມນະໂຍບາຍ ແລະ ນິຕິກຳ ເພື່ອຄົ້ນຄວ້າ ແລະ ນຳສະເໜີການນຳກະຊວງ ພິຈາລະນາອະນຸມັດແນວຄວາມຄິດສ້າງແຜນແມ່ບົດດັ່ງກ່າວ. ການກະກຽມ

ເອກະສານ ແມ່ນໃຫ້ຂຽນຕາມໂຄງຮ່າງ (ເອກະສານຊ້ອນທ້າຍທີ 1). ໄລຍະເວລາໃນການກະກຽມແນວຄວາມຄິດສ້າງແຜນແມ່ບົດ ແມ່ນພາຍໃນ 2 ເດືອນ.

### ຂັ້ນຕອນທີ 2: ຂຽນແຜນແມ່ບົດ ສະບັບຮ່າງ

ຫຼັງຈາກການນຳກະຊວງກະສິກຳ ແລະ ປ່າໄມ້ ເຫັນດີອະນຸມັດໃຫ້ມີການສ້າງແຜນແມ່ບົດ, ພາກສ່ວນທີ່ຂໍສະເໜີສ້າງແຜນແມ່ບົດ ຕ້ອງໄດ້ສືບຕໍ່ຂຽນແຜນແມ່ບົດ ຕາມໂຄງຮ່າງ (ເອກະສານຊ້ອນທ້າຍທີ 2) ແລະ ລົງເກັບກຳສັງລວມຂໍ້ມູນ ແລະ ປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ໃນຂັ້ນສູນກາງ ຫຼື ທ້ອງຖິ່ນ ຖ້າຈຳເປັນ. ໄລຍະເວລາໃນການຂຽນແຜນແມ່ບົດ ສະບັບຮ່າງ ແມ່ນພາຍໃນ 4 ເດືອນ.

### ຂັ້ນຕອນທີ 3: ຈັດກອງປະຊຸມ ຜ່ານຮ່າງແຜນແມ່ບົດ

ພາຍຫຼັງໄດ້ຮັບຮ່າງແຜນແມ່ບົດ ສຳເລັດແລ້ວ ພາກສ່ວນທີ່ສ້າງແຜນແມ່ບົດ ຕ້ອງໄດ້ເຮັດໜັງສືສະເໜີຫາ ກົມນະໂຍບາຍ ແລະ ນິຕິກຳ ພ້ອມກັບ ຮ່າງແຜນແມ່ບົດ ເພື່ອນຳສະເໜີການນຳກະຊວງກະສິກຳ ແລະ ປ່າໄມ້ ໃນການພິຈາລະນາອະນຸມັດ ເປີດກອງປະຊຸມ ເພື່ອຜ່ານຮ່າງແຜນແມ່ບົດດັ່ງກ່າວ ນັບທັງຂັ້ນສູນກາງ ແລະ ທ້ອງຖິ່ນ. ໄລຍະເວລາໃນການປະກອບຄຳເຫັນໃສ່ຮ່າງ ແຜນແມ່ບົດ ກຳນົດເວລາພາຍໃນ 2 ເດືອນ.

### ຂັ້ນຕອນທີ 4: ປັບປຸງຮ່າງແຜນແມ່ບົດ ມາເປັນຮ່າງສະບັບສຸດທ້າຍ

ພາກສ່ວນທີ່ສະເໜີສ້າງແຜນແມ່ບົດ ຕ້ອງໄດ້ປັບປຸງຮ່າງແຜນແມ່ບົດ ມາເປັນຮ່າງສຸດທ້າຍຕາມການປະກອບຄຳເຫັນ ຂອງກອງປະຊຸມ ແລະ ພາກສ່ວນຕ່າງໆ. ໄລຍະເວລາໃນການປັບປຸງຮ່າງແຜນແມ່ບົດ ມາເປັນຮ່າງສະບັບສຸດທ້າຍ, ກຳນົດເວລາພາຍໃນ 1 ເດືອນ.

### ຂັ້ນຕອນທີ 5: ນຳສົ່ງ ຮ່າງແຜນແມ່ບົດ ສະບັບສຸດທ້າຍ

ພາກສ່ວນທີ່ຂໍສະເໜີສ້າງແຜນແມ່ບົດ ໃຫ້ປະກອບຮ່າງແຜນແມ່ບົດ ສະບັບສຸດທ້າຍ ພາຍຫຼັງປັບປຸງສຳເລັດ ໂດຍສົມທົບກັບກົມນະໂຍບາຍ ແລະ ນິຕິກຳ ເພື່ອຮ່າງໜັງສືໃຫ້ການນຳກະຊວງເຊັນອະນຸມັດ. ໃນກໍລະນີແຜນແມ່ບົດຫາກກ່ຽວຂ້ອງກັບຫຼາຍຂະແໜງການ ຕ້ອງໄດ້ນຳສົ່ງໃຫ້ຫ້ອງການສຳນັກງານນາຍົກລັດຖະມົນຕີ ພິຈາລະນາໃນຂັ້ນຕອນຕໍ່ໄປ.

**ສຳລັບຂະບວນການສ້າງແຜນແມ່ບົດ ໂດຍລວມແລ້ວຈະໃຊ້ໄລຍະເວລາປະມານ 01 ປີ.**

## ພາກທີ 3: ການມີສ່ວນຮ່ວມ ຂອງພາກສ່ວນຕ່າງໆ

ການສ້າງແຜນແມ່ບົດ ໃນວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຈະຕ້ອງມີການປະສານສົມທົບ ແລະ ມີສ່ວນຮ່ວມ ຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການຈັດຕັ້ງອື່ນໆ ເພື່ອຮັບປະກັນຄວາມສອດຄ່ອງ, ຍູ້ໜູນຊຶ່ງກັນ ແລະ ກັນ ໃຫ້ແກ່ການຈັດຕັ້ງປະຕິບັດບັນດາ, ຍຸດທະສາດ ແລະ ແຜນງານຕ່າງໆ ໄປຕາມທິດນຳຂອງລັດຖະບານແຫ່ງ ສປປ ລາວ ກໍຄືມະຕິຄຳສັ່ງຕ່າງໆ ຂອງສູນກາງພັກວາງອອກ.

ການມີສ່ວນຮ່ວມ ຂອງພາກສ່ວນກ່ຽວຂ້ອງ ແມ່ນມີຄວາມສຳຄັນຫຼາຍໃນແຕ່ລະຂັ້ນຕອນຂອງການສ້າງແຜນແມ່ບົດ ນັບແຕ່ເລີ່ມຕົ້ນການກຳນົດແນວຄວາມຄິດ ເພື່ອສະເໜີການນຳກະຊວງເຫັນດີໃຫ້ດຳເນີນການຂຽນຮ່າງແຜນແມ່ບົດ ຈົນຮອດຂັ້ນຕອນການຮ່າງ, ປະກອບຄຳເຫັນໃສ່ຮ່າງແຜນແມ່ບົດ ແລະ ປັບປຸງຮ່າງເປັນສະບັບສົມບູນ. ແຕ່ລະພາກສ່ວນ ຈະມີບົດບາດແຕກຕ່າງກັນໃນແຕ່ລະຂັ້ນຕອນ ເຊັ່ນ: ຫ້ອງການ, ບັນດາກົມ, ສະຖາບັນ, ອົງການທຽບເທົ່າ ອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້; ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ; ຈະມີສ່ວນຮ່ວມຕໍ່ຂັ້ນຕອນການສ້າງແຜນແມ່ບົດ; ສຳລັບການນຳກະຊວງ ຈະມີສ່ວນຮ່ວມໃນໄລຍະເລີ່ມຕົ້ນ ຂອງການໃຫ້ທິດຊີ້ນຳ ໃນການກຳນົດປະເດັນບັນຫາທີ່ຕ້ອງການແຜນແມ່ບົດເພື່ອມາແກ້ໄຂ, ປະກອບຄຳເຫັນ ແລະ ອະນຸມັດແຜນແມ່ບົດ ເພື່ອສະເໜີການນຳຂັ້ນສູງຕໍ່ໄປ; ສຳລັບພາກສ່ວນນັກທຸລະກິດ, ຊາວກະສິກອນ, ຜູ້ບໍລິໂພກ, ຜູ້ໃຫ້ທຶນ ແລະ ອື່ນໆ ຈະມີສ່ວນຮ່ວມໃນຂະບວນການປຶກສາຫາລືແລະ ປະກອບຄຳຄິດເຫັນ ເພື່ອປັບປຸງຮ່າງແຜນແມ່ບົດ.

## ເອກະສານຊ້ອນທ້າຍ 1: ໂຄງຮ່າງ " ແນວຄວາມຄິດ ສຳລັບສ້າງແຜນແມ່ບົດ "

**ຈຸດປະສົງ:** ເພື່ອສະເໜີຂໍທິດຊີ້ນຳ ແລະ ອະນຸມັດ ກ່ຽວກັບການກະກຽມ ເອກະສານແຜນແມ່ບົດ.

**ສະເໜີໂດຍ:** ຫ້ອງການ, ບັນດາກົມ, ສະຖາບັນ, ອົງການທຽບເທົ່າ ອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້; ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ.

**ສົ່ງເຖິງ:** ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້.

**ຄວາມຍາວ:** ບໍ່ເກີນ 03 ໜ້າເຈ້ຍ.

---

**ໂຄງຮ່າງແນວຄວາມຄິດ:**

1) **ໜ້າປົກ**

ກ) **ຊື່ແຜນແມ່ບົດທີ່ຕ້ອງການສ້າງ**: ກຳນົດຊື່ຂອງແຜນແມ່ບົດ ເປັນປະໂຫຍກສັ້ນໆ ຖ້າເປັນໄປໄດ້ ໃຫ້ໃຊ້ 2–3 ຄຳເວົ້າ.

- ຊື່ ຕ້ອງຂຽນໃຫ້ສັ້ນ, ກະທັດຮັດ, ອ່ານເຂົ້າໃຈງ່າຍ ແລະ ມີລັກສະນະສະເພາະເຈາະຈົງປະເດັນສຳຄັນ.

ຂ) **ພາກສ່ວນທີ່ສະເໜີ:** ຊື່ ແລະ ທີ່ຢູ່ຕິດຕໍ່ ຂອງກົມ, ສະຖາບັນ, ອົງການທຽບເທົ່າ ອ້ອມຂ້າງ ກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ທີ່ສະເໜີຂໍສ້າງແຜນແມ່ບົດ.

2) **ຄວາມເປັນມາ ແລະ ເຫດຜົນ**

ກ) **ຄວາມເປັນມາ ແລະ ບ່ອນອີງ:**

ກຳນົດ ບັນຫາ, ທ່າແຮງ, ກາລະໂອກາດ ແລະ ທາງເລືອກຕ່າງໆ ທີ່ຕິດພັນກັບແຜນແມ່ບົດ ທີ່ຈະສ້າງຂຶ້ນ:

- ຫຼັກການ ແລະ ບຸລິມະສິດ ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດການພັດທະນາກະສິກຳ 2016 - 2020 ແລະ ວິໄສທັດ ຮອດປີ 2030;
- ແຜນງານບຸລິມະສິດ ຂອງລັດຖະບານ ກໍ່ຄືກະຊວງກະສິກຳ ແລະ ປ່າໄມ້ ເຊັ່ນ: ແຜນງານຄໍ້າປະກັນສະບຽງອາຫານແຫ່ງຊາດ, ຍຸດທະສາດໂພຊະນາການ 2010-2015 ແລະ ແຜນດຳເນີນງານໂພຊະນາການ 2016-2020, ແຜນງານຜະລິດເປັນສິນຄ້າ

ແລະ ຄໍ້າປະກັນສະບຽງອາຫານ, ແຜນງານຄຸ້ມຄອງປ່າໄມ້ແຫ່ງຊາດ ແລະ ແຜນງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ;

- ບັນຫາສຳຄັນທີ່ເກີດຂຶ້ນໃນແຕ່ລະພາກສ່ວນ ເຊັ່ນ: ດ້ານສິ່ງແວດລ້ອມ, ຄວາມທຸກຍາກ, ການປ່ຽນແປງດິນຟ້າອາກາດ, ບົດບາດຍິງ-ຊາຍ ແລະ ອື່ນໆ;
- ສົນທິສັນຍາສາກົນ ເຊັ່ນ: ເປົ້າໝາຍການພັດທະນາແບບຍືນຍົງ (SDG).

ຂ) **ເຫດຜົນ:** ຍ້ອນຫຍັງ ຈຶ່ງຕ້ອງສ້າງແຜນແມ່ບົດ ເພື່ອແກ້ໄຂບັນຫາ ແລະ ສະໜັບສະໜູນ?

- ບອກເຫດຜົນ ແລະ ຄວາມຈຳເປັນພື້ນຖານ ສຳລັບສະເໜີສ້າງແຜນແມ່ບົດ, ການກຳນົດ ບັນຫາທີ່ຈະຕ້ອງແກ້ໄຂ ຫຼື ການຊຸກຍູ້ສົ່ງເສີມ ແລະ ສະໜັບສະໜູນໃຫ້ຈະແຈ້ງ.

ຄ) **ທິດຊີ້ນຳແນວທາງ ຂອງລັດຖະບານ ກໍຄື ກະຊວງກະສິກຳ ແລະ ປ່າໄມ້ ຜ່ານມາ, ປະຈຸບັນ ຫຼື ອະນາຄົດ:** ໄດ້ມີການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຫຍັງ? ເພື່ອແກ້ໄຂບັນຫາ ແລະ ສືບຕໍ່ຈັດຕັ້ງປະຕິບັດ ທີ່ຕິດພັນກັບການສ້າງແຜນແມ່ບົດ.

ງ) **ຂໍ້ຫຍຸ້ງຍາກ ແລະ ຄວາມສ່ຽງ:** ທີ່ຄາດວ່າຈະເກີດຂຶ້ນ ໃນການພັດທະນາແຜນແມ່ບົດໃນຕໍ່ໜ້າ.

## 3) ຈຸດປະສົງ ແລະ ຄາດໝາຍຜົນໄດ້ຮັບ ຂອງແຜນແມ່ບົດ

ກ) **ຈຸດປະສົງ:** ຄວນມີຄວາມກ່ຽວຂ້ອງ ຈຸດປະສົງຂອງການສ້າງແຜນແມ່ບົດກັບການພັດທະນາໂດຍລວມ ແລະ ບັນດາແຜນງານຂອງກະຊວງກະສິກຳ ແລະ ປ່າໄມ້, ດັ່ງທີ່ລະບຸໄວ້ໃນຍຸດທະສາດການພັດທະນາກະສິກຳ ປີ 2025 ແລະ ວິໄສທັດ ຮອດປີ 2030, ແຜນງານຄໍ້າປະກັນສະບຽງອາຫານ ແລະ ການຜະລິດກະສິກຳເປັນສິນຄ້າ, ຍຸດທະສາດໂພຊະນາການແຫ່ງຊາດ 2016 ແລະ ແຜນດຳເນີນງານໂພຊະນາການແຫ່ງຊາດ 2016–2020 ແລະ ເອກະສານ ຫຼື ແຈ້ງການ ທີ່ສຳຄັນຂອງຂະແໜງການ.

ຂ) **ຄາດໝາຍຜົນໄດ້ຮັບ:** ການເພີ່ມຂຶ້ນຂອງສະມັດຕະພາບຜົນຜະລິດເຂົ້າ, ພືດ ແລະ ສັດ, ການເພີ່ມຂຶ້ນຂອງກຳໄລ, ທັງດ້ານປະລິມານ ແລະ ຄຸນນະພາບ, ຄວາມຫຼາກຫຼາຍຂອງອາຫານແຕ່ລະປະເພດ, ການຂະຫຍາຍຕົວຂອງເນື້ອທີ່, ການນຳໃຊ້ເຕັກນິກວິທະຍາສາດ ແລະ ເຕັກໂນໂລຊີ.

## 4) ຜົນປະໂຫຍດ

ກ) **ຜົນປະໂຫຍດ:** ຄວາມສາມາດໃນຈັດຕັ້ງປະຕິບັດແຜນແມ່ບົດ ໃຫ້ມີປະສິດພາບ ແລະ ປະສິດທິຜົນ ຕາມກຳນົດເວລາທີ່ວາງໄວ້ ຂອງແຕ່ລະພາກສ່ວນ ເຊັ່ນ: ຊາວ

ກະສິກອນ, ກຸ່ມຜະລິດ, ຜູ້ປະກອບການ ແລະ ອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນປະໂຫຍດ.

ຂ) **ການຄາດຄະເນຄວາມສ່ຽງ**: ການຈັດຕັ້ງປະຕິບັດແຜນແມ່ບົດ ອາດຈະມີຄວາມສ່ຽງຕໍ່ພາກສ່ວນໃດ? ຜົນກະທົບຫຍັງ? ຍົກຕົວຢ່າງ ແລະ ເຫດຜົນ.

ຄ) **ການຈັດຕັ້ງປະຕິບັດແຜນແມ່ບົດ**: ຕ້ອງຂຽນມາດຕະການໃນການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງ ແນວໃດ ລວມເຖິງ ການຕິດຕາມ, ກວດກາ, ຊຸກຍູ້, ປະເມີນຜົນ, ກໍານົດງົບປະມານ, ການສ້າງແຜນ ແລະ ກໍານົດໄລຍະເວລາ.

5) **ຂະບວນການສໍາລັບການກະກຽມ ແລະ ຮ່າງແຜນແມ່ບົດທີ່ສະເໜີ**

ກ) **ກະກຽມກິດຈະກໍາ ແລະ ໄລຍະເວລາ:** ໃຫ້ບອກຂັ້ນຕອນ ແລະ ວິທີການ, ຕົວຊີ້ວັດໄລຍະເວລາ ທີ່ ຕ້ອງການສ້າງແຜນແມ່ບົດ ຈົນສໍາເລັດ ລວມທັງ ຄວາມຕ້ອງການນໍາໃຊ້ການຊ່ວຍເຫຼືອທາງດ້ານວິຊາການ ພາກສ່ວນໃດແດ່, ພາຍໃນ ຫຼື ສາກົນ.

- ພາກສ່ວນທີ່ກະກຽມຮ່າງແຜນແມ່ບົດ ຕ້ອງໄດ້ຜ່ານການເຂົ້າຮ່ວມຝຶກອົບຮົມຈາກກົມນະໂຍບາຍ ແລະ ນິຕິກໍາ ໃຫ້ເຂົ້າໃຈ ແລະ ນໍາໄປຈັດຕັ້ງປະຕິບັດໄດ້;
- ກໍລະນີຮ່າງແຜນແມ່ບົດ ຕິດພັນກັບຫຼາຍພາກສ່ວນ, ພາກສ່ວນທີ່ຮ່າງແຜນແມ່ບົດຕ້ອງໄດ້ສົມທົບກັບກົມນະໂຍບາຍ ແລະ ນິຕິກໍາ ເພື່ອຈັດສົ່ງຮ່າງແຜນແມ່ບົດດັ່ງກ່າວ ໃຫ້ແກ່ທຸກພາກສ່ວນທີ່ກ່ຽວຂ້ອງ ປະກອບຄໍາເຫັນຕາມໄລະຍະເວລາທີ່ກໍານົດໄວ້ ຈາກນັ້ນກໍ່ນໍາມາປັບປຸງໃຫ້ຄົບຖ້ວນສົມບູນ ແລະ ນໍາສະເໜີຂັ້ນເທິງພິຈາລະນາ.

ຂ) **ກະກຽມງົບປະມານ**: ຕ້ອງຂຶ້ນແຜນງົບປະມານການໃຊ້ຈ່າຍລະອຽດຈະແຈ້ງ ເຊັ່ນ: ແຜນວຽກ, ແຜນຄົນ, ແຜນງົບປະມານ ແລະ ສິ່ງອໍານວຍຄວາມສະດວກອື່ນໆ.

## ເອກະສານຊ້ອນທ້າຍ 2: ໂຄງຮ່າງ " ແຜນແມ່ບົດ "

**ຈຸດປະສົງ:** ເພື່ອຂໍສະເໜີຮັບຮອງ ເອກະສານແຜນແມ່ບົດ.

**ສະເໜີໂດຍ:** ຫ້ອງການ, ບັນດາກົມ, ສະຖາບັນ, ອົງການທຽບເທົ່າ ອ້ອມຂ້າງ ກະຊວງ ກະສິກຳ ແລະ ປ່າໄມ້; ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ.

**ສົ່ງເຖິງ:** ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເພື່ອຮັບຮອງ ຫຼື ສະເໜີຂໍອະນຸມັດ ຮັບຮອງ ໂດຍລັດຖະບານ.

---

**ເນື້ອໃນແຜນແມ່ບົດ:**

- **ການຂຽນເນື້ອໃນແຜນແມ່ບົດ ຄວນເອົາໃຈໃສ່ຫຼັກການລວມ ດັ່ງລຸ່ມນີ້:**
  - ຈັດລຽງຂໍ້ມູນໃຫ້ຊັດເຈນ, ເຂົ້າໃນໂຄງຮ່າງ ຈັດເປັນຫົວຂໍ້ ແລະ ວັກ ໃຫ້ເໝາະສົມ. ສະແດງຂໍ້ມູນຢ່າງເໝາະສົມ, ເລືອກຫົວຂໍ້ຫຼັກ, ຫົວຂໍ້ຍ່ອຍໃຫ້ " ຖືກ " ແລະ ນຳໃຊ້ເຄື່ອງໝາຍເລກວັກ ແບບງ່າຍດາຍ ເພື່ອຊ່ວຍໃຫ້ຜູ້ອ່ານເຂົ້າໃຈງ່າຍ ແລະ ສາມາດຊອກຫົວຂໍ້ ໃນເອກະສານໄດ້ງ່າຍ.
  - ເພື່ອຊ່ວຍໃຫ້ຜູ້ອ່ານ ສາມາດເຂົ້າໃຈເອກະສານແຜນແມ່ບົດງ່າຍຂຶ້ນ, ນຳໃຊ້ ຮູບພາບ, ເສັ້ນສະແດງ, ແຜນທີ່, ຕາຕະລາງແຜນກິດຈະກຳ ໃສ່ໃນເອກະສານແຜນແມ່ບົດ ຫຼື ຄັດຕິດໄວ້ໃນເອກະສານຊ້ອນທ້າຍ;
  - ແຜນແມ່ບົດ ອາດຈະອ້າງອິງເຖິງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຕ່າງໆ ແລະ ແຜນງານໃນການພັດທະນາຂອງລັດຖະບານ, ຫຼື ມະຕິຄາສັ່ງຂອງສູນກາງພັກແຕ່ລະສະໄໝ ແລະ ໃຫ້ກຳນົດຊ່ອງທາງການເຂົ້າເຖິງເອກະສານເຫຼົ່ານັ້ນ ແລະ ຂຽນລາຍການໃສ່ພາກເອກະສານອ້າງອີງ, ນິຕິກຳທີ່ກ່ຽວຂ້ອງ ໃນເອກະສານແຜນແມ່ບົດ;
  - ຄວາມຍາວແມ່ນຂຶ້ນກັບແຜນດຳເນີນງານ ຫຼື ແຜນກິດຈະກຳ;
  - ແຜນແມ່ບົດຈະມີຢູ່ 3 ໄລຍະຄື: ໄລຍະສັ້ນ (1-3 ປີ), ໄລຍະກາງ (3-5 ປີ) ແລະ ໄລຍະຍາວ (5-10 ປີ).

- **ຂຽນເນື້ອໃນແຜນແມ່ບົດ ຕາມຫົວຂໍ້ ດັ່ງນີ້:**

**ໜ້າປົກ**

- ໃສ່ຊື່ແຜນແມ່ບົດ ແມ່ນໃຫ້ເອົາຕາມຊື່ຂອງເອກະສານຊ້ອນທ້າຍ 1.

**ນິຕິກຳ ຮັບຮອງ ແລະ ປະກາດໃຊ້**

- ດຳລັດ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້.

**ຄຳນຳ**

- ຂຽນເຖິງສະພາບລວມ, ຄວາມເປັນມາ ແລະ ຈຸດປະສົງ ຂອງການສ້າງແຜນແມ່ບົດ.

**ຄຳຫຍໍ້**

- ຂຽນລາຍການອັກສອນຫຍໍ້ ໂດຍລຽງຕາມລຳດັບອັກສອນ.

**ນິຍາມຄຳສັບ**

- ຂຽນອະທິບາຍຄວາມໝາຍຂອງຄຳສັບທີ່ສຳຄັນ.

**ພາກທີ I ພາກສະເໜີ**

- ນຳສະເໜີສະພາບການທົ່ວໄປ, ສິ່ງທ້າທາຍ ແລະ ກາລະໂອກາດ ທີ່ເກີດຂຶ້ນ ຕິດພັນກັບແຜນແມ່ບົດ ທີ່ຈະສ້າງຂຶ້ນ;
- ຍົກໃຫ້ເຫັນຫຼັກການ ແລະ ເຫດຜົນ ທີ່ຈະສ້າງແຜນແມ່ບົດ.

**ພາກທີ II ກອບວຽກແຜນແມ່ບົດ**

- ການວິເຄາະ SWOT (ທ່າແຮງ, ບັນຫາ, ໂອກາດ ແລະ ສິ່ງທ້າທາຍ)

**ພາກທີ III ເປົ້າໝາຍ ແລະ ແຜນດຳເນີນງານ**

- ເປົ້າໝາຍທີ່ຈະພັດທະນາ (ນະໂຍບາຍ, ຍຸດທະສາດ ທີ່ນຳມາຜັນຂະຫຍາຍເປັນແຜນຕ່າງໆ);
- ຕົວຊີ້ວັດ;
- ແຜນງານທີ່ວາງໄວ້;
- ກິດຈະກຳບັນດາໂຄງການ (ຫົວຂໍ້ໂຄງການ, ງົບປະມານ, ໄລະຍະເວລາ, ຜູ້ຈັດຕັ້ງປະຕິບັດ)

**ພາກທີ IV ມາດຕະການ ແລະ ການຈັດຕັ້ງປະຕິບັດ**

- ວິທີການ
- ມາດຕະການ/ລະບຽບການ (ກົດໝາຍ ແລະ ນິຕິກຳຕ່າງໆ)
- ການຕິດຕາມ ແລະ ປະເມີນຜົນ

**ເອກະສານອ້າງອີງ**

- ຂຽນລາຍການເອກະສານ ແລະ ຂໍ້ມູນ ທີ່ນໍາໃຊ້ ອ້າງອີງໃນແຜນແມ່ບົດ.

**ເອກະສານຄັດຕິດ**

- ຄັດຕິດເອກະສານ, ສະຖິຕິ, ຫຼື ຂໍ້ມູນ ກິດຈະກໍາ ແລະ ແຜນງົບປະມານທີ່ມີລາຍລະອຽດເພີ່ມເຕີມຈາກເອກະສານແຜນແມ່ບົດ.

**ຄະນະສ້າງຄຳແນະນຳ:**

| | | |
|---|---|---|
| 1. | ທ່ານ ປອ. ທັດສະກາ ສະພັງທອງ | ຫົວໜ້າກົມນະໂຍບາຍ ແລະ ນິຕິກຳ |
| 2. | ທ່ານ ຈັນທະບູນ ສອນທະວີ | ຮອງຫົວໜ້າກົມນະໂຍບາຍ ແລະ ນິຕິກຳ |
| 3. | ທ່ານ ປອ. ວົງປະພັນ ມະນີວົງ | ຫົວໜ້າພະແນກນະໂຍບາຍ |
| 4. | ທ່ານ ສົມສະໄໝ ວົງທິລາດ | ຮອງຫົວໜ້າພະແນກນະໂຍບາຍ |
| 5. | ທ່ານ ຈັນໄຊ ຄຳບັນເສືອງ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 6. | ທ່ານ ນາງ ສີສະຫວັນ ວົງລໍຄຳ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 7. | ທ່ານ ນາງ ຈັນສົມ ຄູນສົມບັດ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 8. | ທ່ານ ສຸກສະຫວັນ ແສງດາເຮືອງຮຸ່ງ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 9. | ທ່ານ ສຸລິເອກ ກິ່ງແກ້ວ | ລັດຖະກອນວິຊາການ ພະແນກນະໂຍບາຍ |
| 10. | ທ່ານ ນາງ ດາວສຸກສັນ ແກ້ວວົງສາ | ລັດຖະກອນວິຊາການ ພະແນກນະໂຍບາຍ |

**ຮຽບຮຽງ ໂດຍ:** **ພະແນກນະໂຍບາຍ, ກົມນະໂຍບາຍ ແລະ ນິຕິກຳ, ກະຊວງກະສິກຳ ແລະ ປ່າໄມ້**

**ຕິດຕໍ່ປະສານງານ:** **ພະແນກນະໂຍບາຍ, ກົມນະໂຍບາຍ ແລະ ນິຕິກຳ, ກະຊວງກະສິກຳ ແລະ ປ່າໄມ້**
**ໂທຣ: 021 417198**
**ແຟັກ: 021 417198**

**ສະໜັບສະໜູນການຈັດພິມ ໂດຍ: ອົງການຮ່ວມມືສາກົນແຫ່ງປະເທດ ຍີ່ປຸ່ນ**

**ການຮ່ວມມື**
**cooperation**
**between**
**MAF - JICA**